ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1049 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 30-9-2020

ດ່ວນທີ່ສຸດ

# ແຈ້ງການ

ຮຽນ: - ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື;

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ.

ເລື່ອງ: ການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການປ້ອງກັນ, ຄວບຄຸມ,ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ວັນທີ 01-31 ຕຸລາ 2020.

- ອີງຕາມຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມການລາຍງານ ການຈັດຕັ້ງປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະຜ່ານມາ;
- ອີງຕາມທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 28 ກັນຍາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້:

1. ເຫັນດີໃຫ້ສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຄືກັນກັບມາດຕະການທີ່ໄດ້ປະຕິບັດໃນເດືອນກັນຍາ 2020 ຜ່ານມາ ຕາມທີ່ໄດ້ລະບຸໃນແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 806/ຫສນຍ, ລົງວັນທີ 29 ກໍລະກົດ 2020 ແລະ ສະບັບເລກທີ 838/ຫສນຍ, ລົງວັນທີ 07 ສິງຫາ 2020 ຢ່າງເຂັ້ມງວດ, ໃນນັ້ນ ສະເພາະມາດຕະການທີ່ສືບຕໍ່ປິດ ມີດັ່ງນີ້:

1) ສືບຕໍ່ປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນ ສຳລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ ແລະ ການຂົນສົ່ງສິນຄ້າ, ຍົກເວັ້ນບາງດ່ານປະເພນີ ຫຼື ດ່ານທ້ອງຖິ່ນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ລົດຂົນສົ່ງສິນຄ້າ ເຂົ້າ-ອອກ ໄດ້. ສ່ວນດ່ານສາກົນ ສືບຕໍ່ປິດສຳລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ, ຍົກເວັ້ນ ພົນລະເມືອງລາວ ແລະ ຊາວຕ່າງປະເທດ ທີ່ມີຄວາມຈຳເປັນຮີບດ່ວນ ໃນການເດີນທາງເຂົ້າ-ອອກ ສປປ ລາວ ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ. ສຳລັບການຂົນສົ່ງສິນຄ້າ ຜ່ານດ່ານສາກົນ ແມ່ນສາມາດເຂົ້າ-ອອກ ໄດ້ຕາມປົກກະຕິ;

2) ສືບຕໍ່ໂຈະການອອກວີຊາທ່ອງທ່ຽວ ແລະ ຢ້ຽມຢາມ ສຳລັບບຸກຄົນ ທີ່ເດີນທາງມາຈາກ ຫຼື ຜ່ານປະເທດ ທີ່ຍັງມີການລະບາດ ຂອງພະຍາດ COVID-19. ສຳລັບ ນັກການທູດ, ພະນັກງານອົງການຈັດຕັ້ງສາກົນ, ຊ່ຽວຊານ, ນັກລົງທຶນ, ນັກທຸລະກິດ, ວິຊາການ ແລະ ແຮງງານຕ່າງປະເທດ ທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ສາມາດເຂົ້າມາປະຕິບັດວຽກງານ ຢູ່ສະຖານທູດ, ບັນດາກິດຈະການ ແລະ ໂຄງການຕ່າງໆ ໄດ້, ແຕ່ຕ້ອງຜ່ານການພິຈາລະນາເຫັນດີຈາກຄະນະສະເພາະກິດ. ສ່ວນຂັ້ນຕອນໃນການປະຕິບັດຕົວຈິງ ແມ່ນໃຫ້ສືບຕໍ່



Scanned with CamScanner

ປະຕິບັດຕາມຄໍາແນະນໍາ ຂອງຄະນະສະເພາະກິດ ສະບັບເລກທີ 2336/ສພກ, ລົງວັນທີ 31 ກໍລະກົດ 2020 ສໍາລັບຜູ້ທີ່ຈະເດີນທາງ ເຂົ້າ-ອອກ ສປປ ລາວ ໃນໄລຍະດໍາເນີນມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ;

3) ໃຫ້ສືບຕໍ່ປິດ ຮ້ານຄາລາໂອເກະ ແລະ ຮ້ານບັນເທີງ.

2. ເຫັນດີອະນຸມັດ ໃຫ້ຈັດງານບຸນອອກພັນສາປະວໍລະນາ ປະຈໍາປີ 2020. ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຮີບຮ້ອນສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ທ້ອງຖິ່ນ ກະກຽມອອກຄໍາແນະນໍາລະອຽດ ກ່ຽວກັບການຈັດບຸນປະເພນີ ແລະ ງານດອງ.

3. ເຫັນດີດ້ານຫຼັກການ ໃຫ້ເປີດການທ່ອງທ່ຽວເປັນກຸ່ມ ສໍາລັບນັກທ່ອງທ່ຽວທີ່ມາຈາກປະເທດທີ່ບໍ່ມີການລະບາດຂອງພະຍາດ COVID-19 ໃນຊຸມຊົນ ເພື່ອຊ່ວຍແກ້ໄຂຜົນກະທົບທາງດ້ານເສດຖະກິດ, ມອບໃຫ້ຄະນະສະເພາະກິດ ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າມາດຕະການໃນການຈັດຕັ້ງປະຕິບັດ ໃຫ້ລະອຽດ.

4. ເຫັນດີດ້ານຫຼັກການອະນຸຍາດ ໃຫ້ເກັບຄ່າໃຊ້ຈ່າຍພື້ນຖານທີ່ຈໍາເປັນ ໃນການກວດຫາເຊື້ອ COVID-19, ໃຫ້ຄະນະສະເພາະກິດ ສົມທົບກັບພາກສ່ວນກ່ຽວຂ້ອງ ກໍານົດອັດຕາຄ່າບໍລິການກວດຫາເຊື້ອດັ່ງກ່າວ ຢ່າງເໝາະສົມ.

5. ເຫັນດີໃຫ້ສືບຕໍ່ປຶກສາຫາລືກັບ ສສ ຫວຽດນາມ ແລະ ສປ ຈີນ ກ່ຽວກັບມາດຕະການໃນການປະຕິບັດຊ່ອງທາງສີຂຽວ (Fast Track).

6. ເຫັນດີດ້ານຫຼັກການໃຫ້ເປີດຖ້ຽວບິນເໝົາລໍາ ສໍາລັບປະເທດທີ່ບໍ່ມີການລະບາດຂອງພະຍາດ COVID-19 ຢູ່ພາຍໃນ ເພື່ອໃຫ້ມີການເຄື່ອນໄຫວທາງດ້ານທຸລະກິດ ແລະ ການກະກຽມໃຫ້ແກ່ການຈັດຕັ້ງປະຕິບັດ ນະໂຍບາຍຜ່ອນຜັນກັບປະເທດຍີ່ປຸ່ນ, ໃຫ້ຄະນະສະເພາະກິດ ກໍານົດມາດຕະການປ້ອງກັນ ແລະ ຈັດຕັ້ງປະຕິບັດໃຫ້ຮັດກຸມ, ເດັດຂາດບໍ່ໃຫ້ມີຄວາມສ່ຽງໃນການນໍາເຊື້ອພະຍາດດັ່ງກ່າວ ເຂົ້າມາແຜ່ລະບາດຢູ່ພາຍໃນປະເທດ.

7. ເຫັນດີດ້ານຫຼັກການ ຕໍ່ການສະເໜີປະຕິບັດມາດຕະການຜ່ອນຜັນການຈໍາກັດບໍລິເວນ ສໍາລັບຜູ້ທີ່ເດີນທາງມາຈາກປະເທດ ທີ່ບໍ່ມີການລະບາດຂອງພະຍາດ COVID-19 ໃນຊຸມຊົນ, ໂດຍເວລາເຂົ້າມາໃຫ້ກວດຫາເຊື້ອ, ລໍຖ້າຜົນກວດ 48 ຊົ່ວໂມງ ຖ້າກວດບໍ່ພົບເຊື້ອ ສາມາດໄປຈໍາກັດບໍລິເວນຕໍ່ຢູ່ໃນທີ່ພັກຂອງສະຖານທີ່ເຮັດວຽກຂອງເຂົາເຈົ້າ ຫຼື ຈໍາກັດບໍລິເວນຢູ່ເຮືອນຂອງຕົນ ສໍາລັບພົນລະເມືອງລາວ ຕາມການສະເໜີຂອງຄະນະສະເພາະກິດ. ສໍາລັບເປົ້າໝາຍຜ່ອນຜັນ ແລະ ມາດຕະການຈັດຕັ້ງປະຕິບັດ ໃຫ້ຄະນະສະເພາະກິດສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ແລະ ອອກຄໍາແນະນໍາ ລະອຽດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ບ່ອນນໍາສົ່ງ:</u>

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ບັນດາສະມາຊິກລັດຖະບານ, ທ່ານລະ | 01 ສະບັບ |
| 4. ອົງການຈັດຕັ້ງພັກ, ບ່ອນລະ | 01 ສະບັບ |
| 5. ສູນກາງແນວລາວສ້າງຊາດ | 01 ສະບັບ |
| 6. ອົງການຈັດຕັ້ງມະຫາຊົນ, ບ່ອນລະ | 01 ສະບັບ |
| 7. ສໍາເນົາ | 01 ສະບັບ |



Scanned with CamScanner